ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------===000===-------------

10 ------

ແຂວງວຽງຈັນ

ເລກທີ........../ຈຂ.ວຈ

ວັນທີ............03 AUG 2016

# ຄຳສັ່ງ

## ຂອງເຈົ້າແຂວງວຽງຈັນ

## ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍທະບຽນສານ

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບເລກທີ 03/ສພຊ,ລົງວັນທີ 21 ຕຸລາ 2015.
- ອີງຕາມ:ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາສະບັບເລກທີ 01/ສພຊ,ລົງວັນທີ 08 ທັນວາ 2008.

-ອີງຕາມ: ກົດໝາຍວ່າດ້ວຍທະບຽນສານ ເລກທີ 11/ສພຊ, ວັນທີ 26/11/2009.

ໃນໄລຍະຜ່ານມາບັນດາອົງການຈັດຕັ້ງຂອງລັດ, ນິຕິບຸກຄົນ ແລະ ບຸກຄົນເຫັນໄດ້ຄວາມສຳຄັນຕໍ່ວຽກງານທະບຽນສານໄດ້ຕັ້ງໜ້າປະຕິບັດລະບຽບກົດໝາຍຢ່າງອອກດີພໍສົມຄວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍດີ, ເປັນການປະກອບເຂົ້າໃນການພັດທະນາເສດຖະກິດ-ສັງຄົມ. ແຕ່ຄຽງຄູ່ກັນນັ້ນເຫັນວ່າຍັງມີບາງພາກສ່ວນຍັງບໍ່ທັນໄດ້ເອົາໃຈໃສ່ ແລະ ຖືເບົາວຽກງານທະບຽນສານ ເຊັ່ນ: ການຕົກລົງບັນຫາຕ່າງໆ ບໍ່ເປັນລາຍລັກອັກສອນ, ການປະກອບເອກະສານບໍ່ໄປຕາມຂັ້ນຕອນ ແລະ ລະບຽບການ ຫລື ສວຍໃຊ້ຊ່ອງວ່າງສ້າງສັນຍາມີການເອົາລັດເອົາປຽບກັນພາໃຫ້ເກີດມີປະກົດການຫຍໍ້ທໍ້ຂຶ້ນ, ການແກ້ໄຂບັນຫາຂອງເຈົ້າໜ້າທີ່ພາກສ່ວນທີ່ກ່ຽວຂ້ອງພົບຄວາມຫຍຸ້ງຍາກ ແລະ ບໍ່ສາມາດປະຕິບັດໄດ້.

ຈາກສະພາບການດັ່ງກ່າວຄືຂ້າງເທິງນັ້ນ ເພື່ອເຮັດໃຫ້ການປະຕິບັດກົດໝາຍຂອງລັດມີຄວາມສັກສິດຮັບໃຊ້ສັງຄົມຢ່າງຖືກຕ້ອງເປັນທຳ, ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ທັງເປັນການສຶກສາອົບຮົມ ແລະ ສ້າງສະຕິເຄົາລົບກົດໝາຍໃຫ້ແກ່ສັງຄົມເທື່ອລະກ້າວ.

## ເຈົ້າແຂວງວຽງຈັນຈຶ່ງອອກຄຳສັ່ງ:

1. ໃຫ້ບັນດາເມືອງ,ພະແນກການ,ອົງການ,ຫ້ອງການ ແລະທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ເອົາໃຈໃສ່ເພີ່ມທະວີໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານຢ່າງເຂັ້ມງວດ, ທັງນີ້ກໍ່ເພື່ອເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກວາງອອກໃຫ້ມີຄວາມໜັກແໜ້ນ ແລະ ມີຜົນສຳເລັດ ໃນການສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ ແລະ ເປັນການສຶກສາອົບຮົມສະຕິເຄົາລົບກົດໝາຍໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ,ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ມີການຂະຫຍາຍຕົວ.

2. ໃຫ້ບັນດາເມືອງ,ພະແນກການ,ອົງການ,ຫ້ອງການ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງທັງພາກລັດ,ເອກະຊົນ ແລະ ພົນລະເມືອງທຸກຄົນຮັບຮູ້ ແລະ ປະຕິບັດຢ່າງເປັນເອກະພາບ ໃນທຸກສັນຍາ ແລະ ເອກະສານປະເພດຕ່າງໆທີ່ກຳນົດໄວ້ໃນມາດຕາ 09 ຂອງກົດໝາຍວ່າດ້ວຍທະບຽນສານຈະຖືວ່າເປັນສັນຍາ ຫຼື ເອກະສານທີ່ຖືກຕ້ອງ,ສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍນັ້ນ,ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກທະບຽນສານເທົ່ານັ້ນ.ໃນກໍລະນີທີ່ສັນຍາ ຫຼື ເອກະສານທີ່ບໍ່ໄດ້ຮັບການຢັ້ງຢືນຈາກອົງການທະບຽນສານນັ້ນ,ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແນະນຳບຸກຄົນ,ນິຕິບຸກຄົນ ຫຼື ອົງການຈັດຕັ້ງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານທີ່ມີສິດອຳນາດເສຍກ່ອນ.

3. ພະແນກຍຸຕິທຳແຂວງວຽງຈັນຕ້ອງເພີ່ມທະວີຄວາມເອົາໃຈໃສ່ປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການ,ຈັດຕັ້ງປະຕິບັດ ແລະ ໂຄສະນາກົດໝາຍວ່າດ້ວຍທະບຽນສານ ແລະ ບັນດານິຕິກຳກ່ຽວກັບວຽກງານທະບຽນສານ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ເພື່ອໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍຄວາມສຳຄັນ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນຄວາມຖືກຕ້ອງຂອງບັນດາສັນຍາ ແລະ ເອກະສານຕ່າງໆໂດຍອົງການທະບຽນສານ.

4. ມອບໃຫ້ພະແນກຍຸຕິທຳເປັນເສນາທິການ ແລະ ເປັນເຈົ້າການປະສານສົມທົບ,ຕິດຕາມ,ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ພ້ອມທັງສະຫຼຸບສັງລວມ ແລະ ລາຍງານຜົນໃຫ້ແຂວງຢ່າງເປັນປົກກະຕິ ເພື່ອຊາບ ແລະ ມີທິດຊີ້ນຳ.

5. ບັນດາທ່ານເຈົ້າເມືອງ,ຫົວໜ້າພະແນກການ,ອົງການ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

6. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງວຽງຈັນ**

ວິດົງ ໄຊຍະສອນ